**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງປ້ອງກັນຄວາມສະຫງົບ

ກົມໃຫຍ່ສັນຕິບານ

ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ

ເລກທີ..3015..../ຕມ

ນະຄອນຫຼວງວຽງຈັນ, ວັນທີ..22..ທັນວາ..2022

## ແຈ້ງການ

**ເຖິງ:** ບຸກຄົນ, ນິຕິບຸກຄົນ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ແລະ ພາກສ່ວນກ່ຽວຂ້ອງ

**ເລື່ອງ:** ການເລີ່ມຈັດຕັ້ງປະຕິບັດ ໃຫ້ແຮງງານຕ່າງປະເທດ ທີ່ເດີນທາງເຂົ້າມາ ສປປ ລາວ ຊື້ປະກັນໄພ

- ອີງຕາມ ຂໍ້ຕົກລົງ ຂອງທ່ານ ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ສະບັບເລກທີ 1854/ປກສ, ລົງວັນທີ 11 ຕຸລາ 2021;
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 745/ຫສນຍ, ລົງວັນທີ 27 ພຶດສະພາ 2022;
- ອີງຕາມ ຂໍ້ຕົກລົງ ຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 1026/ປກສ, ລົງວັນທີ 22 ມິຖຸນາ 2022 ວ່າດ້ວຍການເຫັນດີໃຫ້ ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ກົມໃຫຍ່ສັນຕິບານ ກວດກາເອກະສານຢັ້ງຢືນການຊື້ປະກັນໄພ ສໍາລັບແຮງງານຕ່າງປະເທດ ທີ່ເຂົ້າມາ ສປປ ລາວ;
- ອີງຕາມ ແຈ້ງການຂອງ ກົມໃຫຍ່ສັນຕິບານ ສະບັບເລກທີ 2749/ສບ, ລົງວັນທີ 19 ທັນວາ 2022.

ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ໂດຍປະຕິບັດຕາມ ທິດຊີ້ນໍາຂອງລັດຖະບານ ກ່ຽວກັບການຕົກລົງເຫັນດີ ໃຫ້ກະຊວງປ້ອງກັນຄວາມສະຫງົບ ໃນການເລີ່ມຈັດຕັ້ງປະຕິບັດ ໃຫ້ແຮງງານຕ່າງປະເທດ ທີ່ຈະເດີນທາງເຂົ້າມາ ສປປ ລາວ ຕ້ອງຊື້ປະກັນໄພ, ຊຶ່ງລາຍລະອຽດ ມີຄືດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ທີ່ສະເໜີຂໍນໍາເຂົ້າແຮງງານຕ່າງປະເທດ (ຂໍວີຊາແຮງງານ La-B2) ຕ້ອງຊື້ປະກັນໄພຢູ່ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ກ່ອນຍື່ນໜັງສືສະເໜີ (ເຕເລັກ);
2. ຄົນຕ່າງປະເທດ ທີ່ເຂົ້າມາ ສປປ ລາວ ໃນນາມຍົກເວັ້ນວີຊາ ກໍານົດໃຫ້ຊື້ປະກັນໄພ ໃນກໍລະນີ ເຈົ້າໜ້າທີ່ ຕມ ປະຈໍາດ່ານ ກວດກາ ແລະ ຮູ້ວ່າຜູ້ກ່ຽວເຂົ້າມາ ເພື່ອປະກອບອາຊີບ ຫຼື ອອກແຮງງານ ຢູ່ ສປປ ລາວ;
3. ນັບແຕ່ວັນທີ 03 ມັງກອນ 2023 ເປັນຕົ້ນໄປ ເລີ່ມຈັດຕັ້ງປະຕິບັດ ໃຫ້ແຮງງານຕ່າງປະເທດ ທີ່ຈະເດີນທາງເຂົ້າມາ ສປປ ລາວ ຕ້ອງຊື້ປະກັນໄພ. ເຈົ້າໜ້າທີ່ ຕມ ປະຈໍາດ່ານ ຈະກວດກາ ເອກະສານຢັ້ງຢືນການຊື້ປະກັນໄພ ທຸກຄັ້ງ ກ່ອນອະນຸຍາດ ໃຫ້ແຮງງານຕ່າງປະເທດ ເຂົ້າມາ ສປປ ລາວ, ໃນກໍລະນີ ຍັງບໍ່ມີປະກັນໄພ ຕ້ອງໄດ້ຊື້ປະກັນໄພຢູ່ດ່ານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມເນື້ອໃນແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ້າກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ

ກົມໃຫຍ່ສັນຕິບານ ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ

**ສາຍສະໜິງ ສີວິໄລ**


ຜູ້ປະສານງານ:

| | |
|---|---|
| ພັທ ວິໄລ ເກດລາສີ | 020 5544 4000 |
| ພັທ ສີເມືອງ ຈັນທະລັງສີ | 020 5560 2939 |
| ຮອ ສຸກພາລັກ ທໍາມະວົງ | 020 5679 6061 |